**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 93 /ຈທວ
ນະຄອນຫຼວງວຽງຈັນ, ວັນທີ 25 APR 2022

## ແຈ້ງການ

**ເຖິງ: ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ**
**ເລື່ອງ: ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວຂອງວິສາຫະກິດ ຈໍານວນ 4 ຫົວໜ່ວຍ ຕາມໜັງສືສະເໜີຂອງກົມສ່ວຍສາອາກອນ ກະຊວງການເງິນ**

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເລກທີ 76/ຈທວ, ລົງວັນທີ 18 ມີນາ 2021;
- ອີງຕາມ ໜັງສືສະເໜີຂອງກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 1637/ກສອ, ລົງວັນທີ 19 ເມສາ 2022.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກໍາ ແລະ ການຄ້າ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຂອງວິສາຫະກິດ ຈໍານວນ 4 ຫົວໜ່ວຍ ຕາມໜັງສືສະເໜີຂອງກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 1637/ກສອ, ລົງວັນທີ 19 ເມສາ 2022 ເຮັດໃຫ້ວິສາຫະກິດດັ່ງກ່າວສາມາດສືບຕໍ່ເຄື່ອນໄຫວໄດ້ ໂດຍໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ນັບແຕ່ວັນທີ່ອອກແຈ້ງການສະບັບນີ້ເປັນຕົ້ນໄປ;

2. ສໍາລັບ ວິສາຫະກິດ ທີ່ຍັງຖືກມາດຕະການ ຕາມໜັງສືແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ສະບັບເລກທີ 76/ຈທວ ລົງວັນທີ 18 ມີນາ 2021 ແມ່ນໃຫ້ສືບຕໍ່ເຂົ້າໄປພົວພັນກັບເຈົ້າໜ້າທີ່ສ່ວຍສາອາກອນ, ກົມສ່ວຍສາອາກອນ, ກະຊວງການເງິນ **ກ່ອນວັນທີ 28 ເມສາ 2022** ເພື່ອປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງສ່ວຍສາອາກອນ. ຖ້າຫາກກາຍກໍານົດເວລາຂ້າງເທິງນີ້ ວິສາຫະກິດດັ່ງກ່າວ ຈະຖືກພິຈາລະນາແຈ້ງໂຈະການເຄື່ອນໄຫວທຸລະກິດ ຖາວອນ;

3. ຈໍານວນ ວິສາຫະກິດທີ່ສືບຕໍ່ໂຈະ ແລະ ຍົກເລີກໂຈະ ການເຄື່ອນໄຫວທຸລະກິດຊົ່ວຄາວ ມີດັ່ງນີ້:

| ຈໍານວນແຈ້ງໂຈະຊົ່ວຄາວທັງໝົດ | ຍົກເລີກຜ່ານມາ | ຍົກເລີກຄັ້ງນີ້ | ຈໍານວນທີ່ຍັງເຫຼືອປັດຈຸບັນ |
|---|---|---|---|
| 709 ຫົວໜ່ວຍ | 138 ຫົວໜ່ວຍ | 4 ຫົວໜ່ວຍ | 567 ຫົວໜ່ວຍ |

ນອກນີ້ທ່ານຍັງສາມາດກວດສອບ ໄດ້ຕາມຄິວອາໂຄດ (QR Code) ຄັດຕິດແຈ້ງການສະບັບນີ້ ຫຼື ໂດຍຜ່ານເວັບໄຊ້ WWW.NED.MOIC.GOV.LA ຫຼື Facebook ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ.

ດັ່ງນັ້ນ, ຈິ່ງແຈ້ງມາເພື່ອຊາບ ແລະ ປະຕິບັດ.

709 ສັ່ງ 22-4-2022
(ສືບຕໍ່ໂຈະຊົ່ວຄາວ)

709 ຍົກເລີກ 22-4-2022
(ຍົກເລີກໂຈະຊົ່ວຄາວ)

**ເຈົ້າໜ້າທີ່ທະບຽນວິສາຫະກິດ**

ກະຊວງອຸດສາຫະກໍາ ແລະ ການຄ້າ
ເຈົ້າໜ້າທີ່ທະບຽນວິສາຫະກິດ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ສຸລິຄໍາ ແຈ້ງສະຫວ່າງ

ບ່ອນສົ່ງ:
- ກົມສ່ວຍສາອາກອນ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ 1 ສະບັບ;
- ວິສາຫະກິດທີ່ກ່ຽວຂ້ອງ 1 ສະບັບ;
- ສໍານັກ 1 ສະບັບ.

Scanned with CamScanner